Progress Update on TORs between PR & Co-PR for GC8

LAO-C-MOH for HANSA2 Project

September 18, 2026

ສາລະບານ

1. ພາບລວມ
2. ການບໍລິຫານຄຸ້ມຄອງ
3. ການປະສານງານ
4. ຕາຕະລາງສະຫລຸບບົດຂາດແລະຄວາມຮັບຜິດຊອບ
5. ຕາຕະລາງຊ້ອນທ້າຍ: ການແບ່ງຄວາມຮັບຜິດຊອບລະຫວ່າງ ກົມ ແຜນການ ແລະ ການເງິນ ແລະ ກົມຄວບຄຸມພະຍາດຕິດຕໍ່ ເພື່ອການຄຸ້ມ ຄອງບໍລິຫານ ວຽກງານຂອງໂຄງການ ຫັນສາ 2

ພາບລວມ

1. ພາບລວມ

ກະຊວງສາທາລະນະສຸກຂອງ ສປປ ລາວ ເປັນຜູ້ໄດ້ຮັບທຶນຕົ້ນຕໍ (Principal Recipient-PR) ຂອງທຶນຊ່ວຍເຫຼືອລ້າຈາກ ກອງທຶນໂລກຕ້ານເອດ, ວັນນະໂລກ (Global Fund-GFATM). ຕາງໜ້າໂດຍ ກົມແຜນການ ແລະ ການເງິນ ເປັນ PR ແລະ ກົມຄວບຄຸມພະຍາດຕິດຕໍ່ ເປັນ Co-PR ໃນການຈັດຕັ້ງປະຕິບັດ ການຄວບຄຸມພະຍາດ ເອດ ແລະ ວັນນະໂລກ ໂດຍ ຜ່ານກົນໄກ ໂຄງການ HANSA, ສຳຫຼັບ ກອງທຶນໂລກ ທີ່ຊ່ວຍເຫຼືອວຽກງານ ຄວບຄຸມໄຂ້ຍຸງ ແມ່ນ ເປັນ ກອງທຶນ ພາກພື້ນ 5 ປະເທດ ໂດຍ ອົງການ UNOPs PR ແລະ ກົມຄວບຄຸມພະຍາດຕິດຕໍ່ ເປັນ Co-PR ແຕ່ ກົນໄກການເງິນ ຍັງ ຜ່ານ ລະ ບົບ ປະຕູດຽວ.

ຕາມມາດຕາ 8 ຂອງຂໍ້ກຳນົດຄວາມໄວ້ວາງໃຈສຳລັບຜູ້ໄດ້ຮັບທຶນ (Fiduciary Arrangements for Grant Recipients) ຊຶ່ງໄດ້ກຳນົດບົດບາດຂອງຜູ້ໄດ້ຮັບທຶນຕົ້ນຕໍ ໃນຖານະເປັນຜູ້ຮັບຜິດຊອບຕາມກົດໝາຍຕໍ່ຜົນຮັບຂອງແຜນງານ ແລະ ຄວາມຮັບຜິດຊອບ.

ການບໍລິຫານຄຸ້ມຄອງ

2. ການບໍລິຫານຄຸ້ມຄອງ

ກະຊວງສາທາລະນະສຸກໄດ້ສ້າງຕັ້ງໜ່ວຍງານຄຸ້ມຄອງໂຄງການ (National Project Coordination Office-NPCO) ຂຶ້ນ ເພື່ອຮັບຜິດຊອບໃນການເປັນຈຸດປະສານງານ ກັບກອງທຶນ ໂລກ ແລະ ຜູ້ຈັດຕັ້ງປະຕິບັດ ທາງດ້ານ ແຜນການ ແລະ ງົບປະມານ ພ້ອມທັງ ເປັນ ເສນາທິການ ໃຫ້ ກົມແຜນການ ແລະ ການເງິນ.

ກົມແຜນການ ແລະ ການເງິນ ຊີ້ນຳ ນຳພາ NPCO ໂດຍກົງ ແລະ ເປັນຜູ້ລາຍງານ ຕໍ່ຄະນະບໍລິຫານການນຳກະຊວງ ແລະ ລັດຖະມົນຕີກະຊວງສາທາລະນະສຸກ ແລະ ຄະນະກຳມະການປະສານງານລະດັບປະເທດ (Country Coordinating Mechanism-CCM) ກ່ຽວກັບ ຜົນການ ການຈັດຕັ້ງປະຕິບັດໂຄງການ.

ການປະສານງານ

3. ການປະສານງານ

ກົນໄກ ການປະສານງານ ຜູ້ປະສານງານໂຄງການ

ເພື່ອ ຮັບປະກັນ ການປະສານງານ ໃຫ້ ມີຄວາມຄ່ອງຕົວ ແລະ ສອດຄ່ອງ ກັບ ພາລະບົດບາດ ຂອງ ແຕ່ລະ ກົມ ແລະ ແຕ່ ລະສູນ ໃນການຈັດຕັ້ງປະຕິບັດໂຄງການ ກົນໄກ ການປະສານງານ ປະຕິບັດດັ່ງລຸ່ມນີ້:

1. NPCO ແມ່ນມີພາລາບົດບາດໃນການປະສານງານກັບກອງທຶນໂລກ, PR ແລະ Co-PR.
2. Co-PR ແມ່ນ ປະສານງານ ກັບຜູ້ຈັດຕັ້ງປະຕິບັດ ໂດຍ ເຮັດວຽກຢ່າງໃກ້ຊິດກັບ NPCO.
3. PR ແລະ Co-PR ແມ່ນ ໃຫ້ມີກົນໄກ ການປະສານງານທີ່ເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

ตาตะลางสะຫลุบขิดขาดและถอามธับผิดชอบ

4. ตาตะลางสะหลุบขิดขาดและถอามธับผิดชอบ

ตำแหน่ง/ໜ่อยงาน	ถอามธับผิดชอบหลัก
กะซวงสาทาละนะสุก	ผู้ได้ธับทึนต็นตำ (PR) ขอງทึนช่วยเหลือล้าขอງกองทึนโลก.
ลัดถะมินติ กะซวงสาทาละนะสุก	ติอแทนผู้มิอำนาดขอງผู้ได้ธับทึนต็นตำในการเธัดข็ติกลิงตามกิดหมาย และ เป็นผู้ตัดสินใจสูงสุดขอງกะซวง.

กิมแผนการ และ การเงิน (DG, DPF)	ชี้นำลอม ในการคุ้มถอง และ จัดตั้งปะติบัดโถงการ, เป็นติอแทนในการลิงนามเอกะสานที่มิผินผูกพันตามกิดหมาย; ผู้ธับผิดชอบต็นตำ ด้านการบໍลิหานคุ้มถอง ปะจำอัน และ การชี้นำ NPCO; ผู้ลายงาน ต่ำ ลัดถะมินติ และ กองทึนโลก; และ เซ็นใบสะเหมิขໍเบิกจ่ายทึนช่วยเหลือล้า. การคุ้มถองด้านการเงิน และ การจัดซื้จัดจ้าง; และ ติอซื้อัด ต่างๆ โดย ผ่านการปึกสาหาลิกับ NPCO Manager.
กิมถอบคุมพะยาดติดต่ำ (DG, DCDC)	ชี้นำด้าน อิชาการ ของผู้จัดตั้งปะติบัด ลอมทัง การขึ้นแผน, การสะหรุบ การติดตามชุกยู้การจัดตั้งปะติบัด ร่อมกับ NPCO และ PR.
ໜ่อยงานคุ้มถองโถงการ (NPCO)	เป็นจุดไจกางในการปะสานงานกับ PR และ Co-PR ในการจัดตั้งปะติบัดโถงการ, เธัดอวดย่างใก้ชิดกับ Co-PR ในการ อางแผน ติดตามติอซื้อัด, สะหรุบ และ ปะเมินผิน และ การคุ้มถองบໍลิหานกาเงิน, การจัดซื้จัดจ้าง และ การลายงาน ในถานะผู้ได้ธับทึนต็นตำ ลอมทังการลายงานไปยังกองทึนโลก และ CCM ผ่านหัอหน้ากิมการเงิน.

ลายละอวด การแบ่งถอามธับผิดชอบ ละหว่าง กิมแผนการ และ การเงิน และ กิมถอบคุมพะยาดติดต่ำ แม่น ได้ละบุไอ้ ยู่ตาตะลางช้อมท้าย ติดถัดมาพ้อมนี้.

ຕາຕະລາງຊ້ອນທ້າຍ: ການແບ່ງຄວາມຮັບຜິດຊອບລະຫວ່າງ ກົມແຜນການ ແລະ ການເງິນ ແລະ ກົມຄວບຄຸມພະຍາດຕິດຕໍ່ ເພື່ອການຄຸ້ມຄອງບໍລິຫານ ວຽກງານຂອງໂຄງການ ຫັນສາ 2

	ຕາຕະລາງຊ້ອນທ້າຍ: ການແບ່ງຄວາມຮັບຜິດຊອບລະຫວ່າງ ກົມແຜນການ ແລະ ການເງິນ ແລະ ກົມຄວບຄຸມພະຍາດຕິດຕໍ່ ເພື່ອການຄຸ້ມຄອງບໍລິຫານ ວຽກງານຂອງໂຄງການ ຫັນສາ 2		
	ໜ້າວຽກ	**ກົມແຜນ ແລະ ການເງິນ/ຫ້ອງການປະສານງານໂຄງການ (DPF/NPCO)**	**ກົມຄວບຄຸມພະຍາດຕິດຕໍ່ (DCDC)/CHAS and TB**
1	ການຄຸ້ມຄອງທາງ ດ້ານການເງິນ	(1) ກວດຜ່ານແຜນງົບປະມານຂອງກິດຈະກຳເພື່ອໃຫ້ສອດຄ່ອງກັບ ແຜນກິດຈະກຳປະຈຳປີ ຂອງສູນເອດ ແລະ ວັນນະໂລກ (2) ສັງລວມການໃຊ້ຈ່າຍງົບປະມານ ຂອງແຕ່ລະສູນ, ແຂວງແລະ ເມືອງ ເພື່ອລົງບັນຊີໂຄງການ ແລະລາຍງານໃຫ້ ທະນາຄານໂລກແລະກອງທຶນໂລກ ເປັນແຕ່ລະໄລຍະ 6 ເດືອນ.	(1) ຊີ້ນຳດ້ານການຈັດຕັ້ງປະຕິບັດໂຄງການຂອງບັນດາສູນທີ່ຂຶ້ນກັບ ສາຍແຜນງານ ລວມທັງ ການຂຶ້ນແຜນ, ການສະຫຼຸບ ການຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດ ແລະ ສົມທົບກັບບັນດາສູນ ໃນການສັງລວມຜົນການຈັດຕັ້ງປະຕິບັດ ແລະ ຖອດຖອນບົດ ຮຽນ (2) ລາຍງານການໃຊ້ຈ່າຍງົບປະມານຂອງແຕ່ລະກິດຈະກຳຂອງກົມ ແລະ ສູນ ທີ່ກ່ຽວຂ້ອງໃຫ້ແກ່ກົມແຜນການ ແລະ ການເງິນ ໜ່ວຍປະສານງານໂຄງການ ໂດຍນຳ ໃຊ້ລະບົບບັນຊີການເງິນ ຂອງໂຄງການ ຫລື ຜ່ານລະບົບລາຍງານ ເຊັກແຊວ dropbox.
2	ການປະສານງານ ການຄຸ້ມຄອງ ບໍລິຫານໂຄງການ	(1) ເປັນໃຈກາງໃນການປະສານງານ ທາງດ້ານການຄຸ້ມຄອງບໍລິຫານໂຄງການ ລະຫວ່າງຜູ້ໃຫ້ທຶນ ແລະ ກະຊວງສາທາລະນະສຸກ (2) ເປັນໃຈກາງໃນການປະສານ ງານ ລະຫວ່າງ PR ແລະ Co-PR.	(1) ຜັນຂະຫຍາຍແຜນການປະຈຳປີ ໃຫ້ເປັນແຜນກິດຈະກຳ ແລະ ແຜນງົບປະມານ ລະອຽດ ອີງໃສ່ແຜນການປະຈຳປີທີ່ໄດ້ຮັບຮອງ.
3	ການປະສານງານດ້ານວິຊາການ	(1) ປະສານງານກັບຜູ້ໃຫ້ທຶນເພື່ອຂໍອານຸມັດຈັດຕັ້ງປະຕິບັດ ກິດຈະກຳທີ່ບໍ່ຢູ່ໃນ ແຜນປະຈຳປີ ທີ່ໄດ້ຮັບຮອງແລ້ວນັ້ນ (2) ນຳສະເໜີ ຫາການນຳກະຊວງ ແລະ ຜູ້ ໃຫ້ທຶນ ເພື່ອຂໍອານຸມັດ ແກ້ໄຂ ບັນດາກິດຈະກຳທີ່ເປັນບັນຫາ ທາງດ້ານວິຊາການ.	(1) ສະໜອງຂໍ້ມູນທາງດ້ານວິຊາການ ທີ່ຕິດພັນກັບ ວິຊາສະເພາະ ຂອງແຜນງານ ການຄວບຄຸມ ແລະ ປ້ອງປ້ອພະຍາດ ເອດ ແລະ ວັນນະໂລກ (2) ປະສານງານໂດຍກົງ ກັບຜູ້ໃຫ້ທຶນ ກ່ຽວກັບວິຊາສະເພາະດ້ານ ເອດ ແລະ ວັນນະໂລກ

ຕາຕະລາງຊ້ອນທ້າຍ: ການແບ່ງຄວາມຮັບຜິດຊອບລະຫວ່າງ ກົມ ແຜນການ ແລະ ການເງິນ ແລະ ກົມຄວບຄຸມພະຍາດຕິດຕໍ່ ເພື່ອ ການຄຸ້ມຄອງບໍລິຫານ ວຽກງານຂອງໂຄງການ ຫັນສາ 2, (ສືບຕໍ່)

4	ການຄຸ້ມຄອງ ການຈັດຊື້ຈັດຈ້າງ	(1) ສັງລວມແຜນຈັດຊື້ຈັດຈ້າງທັງໝົດຂອງໂຄງການ (procurement plan) ເພື່ອຂໍອານຸມັດຮັບຮອງຈາກ ທະນາຄານໂລກ ແລະ ກອງທຶນໂລກ (2) ດຳເນີນຂັ້ນຕອນການຂໍອານຸມັດຈັດຕັ້ງປະຕິບັດ ການຈັດຊື້ຈັດຈ້າງ ທີ່ຢູ່ພາຍໃນປະເທດ (3) ຊ່ວຍທາງກົມ ແລະ ສູນເພື່ອດຳເນີນການຈັດຊື້ຈັດຈ້ງໂດຍຜ່ານລະບົບ Wamboo ຫລື STEP.	(1) ສະໜອງຂໍ້ມູນ ທີ່ຈຳເປັນໃຫ້ແກ່ຫ້ອງການປະສານງານໂຄງການ ເພື່ອປະກອບໃຫ້ແກ່ຂະບວນການຈັດຊື້-ຈັດຈ້າງ ເປັນຕົ້ນແມ່ນ TOR, specification ຂອງການຈັດຊື້ ຢາ ແລະ ອຸປະກອນການແພດ ສຳລັບ ການປິ່ນປົວ ແລະ ປ້ອງກັນ ພະຍາດ ເອດ ແລະ ອັນນະໂລກ (2) ເປັນເຈົ້າການເຂົ້າຮ່ວມທຸກຂັ້ນຕອນການຈັດຊື້ຈັດຈ້າງ ຂອງ ໂຄງການ (3) ຕິດຕາມຄວາມຄືບໜ້າ ຮ່ວມກັບ ໜ່ວຍງານຈັດຊື້ຈັດຈ້າງ ຂອງ ຫ້ອງການປະສານງານ ໃນທຸກຂັ້ນຕອນຂອງການຈັດຊື້-ຈັດຈ້າງ.
5	ການຕິດຕາມ ແລະ ລາຍງານດ້ານ ວິຊາການ	(1) ສັງລວມ ແລະ ລາຍງານ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ປະຈຳ 6 ເດືອນ ໃຫ້ແກ່ຜູ້ໃຫ້ທຶນ Semiannual report (2) ຈັດກອງປະຊຸມເພື່ອຕິດຕາມຄວາມ ຄືບໜ້າ ປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີ (3) ເປັນຈຸດໃຈກາງໃນການ ປະສານງານທາງດ້ານວິຊາການພາຍໃນກະຊວງ ແລະ ກັບຜູ້ໃຫ້ທຶນ.	(1) ຕິດຕາມ ແລະ ລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ຕິອຊີ້ວັດ ທີ່ຕິດ ພັນກັບ ແຜນງານ ການປ້ອງກັນ ແລະ ປິ່ນປົວ ໂລກເອດ ແລະ ອັນນະໂລກ (2) ລາຍ ງານຄວາມຄືບໜ້າ, ບັນຫາ ແລະ ສິ່ງທ້າທາຍ, ສາເຫດທີ່ບໍ່ສາມາດບັນລຸໄດ້ ເປົ້າໝາຍ ຕິອຊີ້ວັດທີ່ວາງໃວ້ ແຕ່ລະໄລຍະ ໃຫ້ແກ່ສາຍແຜນງານໂຕເອງ ແລະ ຫ້ອງການປະສານ ງານ ໂຄງການ (3) ມອບໝາຍ ຕິອເລກຄາດໝາຍ ສູ່ຊົນຂອງແຕ່ລະຕິອຊີ້ວັດ ໃຫ້ແກ່ ຫົວໜ່ວຍຈັດຕັ້ງປະຕິບັດ ຢູ່ຂັ້ນສູນກາງ, ແຂວງ ແລະ ເມືອງ.
6	ຕິດຕາມ ແລະ ລາຍງານ ການຈັດຕັ້ງປະຕິບັດ ກິດຈະກຳ	(1) ສັງລວມ ແລະ ລາຍງານ ຄວາມຄືບໜ້າການຈັດຕັ້ງປະຕິບັດກິດຈະກຳ.	(1) ລາຍງານ ຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດກິດຈະກຳ ທີ່ໄດ້ຮັບຮອງຢູ່ໃນ ແຜນປະຈຳປີ ທາງດ້ານວິຊາການໃຫ້ແກ່ ຫ້ອງການປະສານງານໂຄງການ ໂດຍສະເພາະ ທາງດ້ານການເງິນ ຈະຕ້ອງໄດ້ລາຍງານເຂົ້າໃນລະບົບບັນຊີຂອງໂຄງການ.

ຂໍຂອບໃຈ